# ມີລູກ ກໍຕ້ອງທຸກຂ໌ນໍາລູກ

ລູກທັງຫຼາຍເອີຍ! ຈົ່ງເຂົ້າໃຈເລື້ອງພໍ່ກັບແມ່ແນ່! **ພໍ່ກັບແມ່ມີແຕ່ຢາກໃຫ້ລູກດີ ລູກຊອບ ລູກປະກອບຊອບທັມ ພໍ່ກັບແມ່ມີແຕ່ວິ້ງວອນຂໍພອນຈາກພຣະຊ່ວຍລູກ** ທັງທີ່ວ່າລູກເກີດມານໍາພໍ່ນໍາແມ່ແທ້ໆ ແຕ່ພໍ່ແມ່ບໍ່ສາມາດສັ່ງສອນລູກໄດ້. ລູກເອີຍ! ຊີວິດພໍ່ກັບແມ່ເໝືອນຕາຍທັງເປັນ ລູກຄິດບໍ່ວ່າພໍ່ແມ່ຮັກລູກພຽງໃດ ເອົາໃຈໃສ່ນໍາລູກ ລ້ຽງລູກມາຈົນໃຫຍ່ ແຕ່ວ່າລູກກັບບໍ່ເຂົ້າໃຈ ພໍ່ກັບແມ່ມີແຕ່ຄິດ ຄິດແລ້ວຄິດອີກ ຄິດແສນຄິດ ທັງຄິດ ທັງທໍລະມານ ຢ້ານລູກບໍ່ດີຢ້ານລູກບໍ່ຊອບ ຢ້ານລູກບໍ່ປະກອບຊອບທັມ ຢ້ານປ່ຽນນິສັຍບໍ່ໄດ້

ລູກເອີຍ! ລູກທຸກຕົນທຸກຄົນເອີຍ! ຂໍຈົ່ງໄດ້ຍິນສຽງພໍ່ກັບແມ່ແນ່! ພໍ່ກັບແມ່ທັງສອງ ຂໍຮ້ອງທຸກວັນທຸກວັນຢາກໃຫ້ລູກດີ, **ຖ້າລູກດີ ພໍ່ກັບແມ່ຄືຊິມີແຕ່ຄວາມສຸຂ ສຸຂອັນໃດກໍຄືຈະບໍ່ເໝືອນປຽບປານລູກດີໄດ້** ແຕ່ວ່າພໍ່ກັບແມ່ກໍໄດ້ແຕ່ຄອງຄອຍ ຄອງຄອຍລູກ ຄອງຄອຍວັນປ່ຽນນິສັຍຂອງລູກ. ລູກເອີຍ! ຫົວອົກຫົວໃຈຂອງພໍ່ແມ່ ຮູ້ຢູ່ບໍ ວ່າພໍ່ກັບແມ່ຄິດ? ວ່າພໍ່ກັບແມ່ຫ່ວງຫາລູກ? ໄຫວ້ພຣະພາວະນາກໍຄິດເຫັນແຕ່ໜ້າລູກທັງສອງພໍ່ກັບແມ່ກໍຄືໆກັນ. **ລູກເອີຍ! ວັນນີ້ເຈົ້າສໍານຶກຍັງບໍ່ທັນໄດ້ ວັນໜ້າຂໍໃຫ້ເຈົ້າຈົ່ງສໍານຶກໄດ້ ວັນຕໍ່ໄປ ຂໍໃຫ້ເຈົ້າຈົ່ງມີແຕ່ນິສັຍໃໝ່ ແລະເປັນຄົນໃໝ່!** ໃໝ່ສະຫງົບທາງໃນ ໃໝ່ແບບວ່າຮູ້ເຂົ້າເຖິງ ເຖິງຄຸນພຣະພໍ່ພຣະແມ່ ວ່າຫົວອົກຫົວໃຈຂອງພໍ່ກັບແມ່ເປັນແນວໃດ? **ກ່ອນພໍ່ກັບແມ່ຈະຈາກເຈົ້າໄປ ຂໍໃຫ້ເຈົ້າຈົ່ງເຂົ້າໃຈພໍ່ກັບແມ່ຫຼາຍໆ ພໍ່ກັບແມ່ຄືຊິມີແຕ່ຄວາມສຸຂ.**

ລູກຍິງເອີຍ! ລູກຊາຍເອີຍ! ຜູ່ເລັກຜູ່ນ້ອຍກໍດີ ຜູ່ໃຫຍ່ກໍດີ ຂໍຈົ່ງພາກັນຫັນເຖີດ! ຫັນປ່ຽນແນວຄິດ ຫັນອວ່າຍອອກ ອວ່າຍຊ່ວຍເຈົ້າຂອງ ອວ່າຍຊ່ວຍຜູ່ອື່ນ ເອົາຄວາມດີຝາກຕ້ອນໃຫ້ກັນ ເອົາຄວາມດີຝາກໃຫ້ພໍ່ໃຫ້ແມ່ ເອົາຄວາມດີຝາກໄວ້ໃຫ້ເຈົ້າຂອງ ຝາກນໍາກັນທັງເໝິດທຸກຝ່າຍ ຝ່າຍໃດກໍຝາກແຕ່ຄວາມດີໃຫ້ຢາກໃຫ້ລູກຄິດໄດ້ແນວນີ້ ລູກຄືຊິມີແຕ່ຄວາມສຸຂ ລູກຄືຊິບໍ່ທຸກຂ໌ ເພາະວ່າລູກທໍາຄວາມດີໄວ້ ຄວາມດີກໍຍ່ອມເປັນຜົນຕອບແທນ. ລູກເອີຍ! ເຄີຍຮູ້ຈັກບໍ່ ຄຸນຂອງຄວາມດີ? ຖ້າມີ ຈະໄດ້ອາສັຍພັຍເພິ່ງ ຈະໄດ້ອອກໄດ້ເຂົ້າງ່າຍ ໄດ້ເຂົ້າໄປຫາສິ່ງທີ່ເຮົາພໍໃຈ ໄດ້ອອກມາຫາສິ່ງທີ່ລູກມັກ! ລູກມັກອັນໃດ ກໍຈະໄດ້ພົບໄດ້ພໍ້! ສິ່ງດີນັ້ນແລ້ວ ເປັນຜົນຕອບແທນ.

**ລູກເອີຍ! ຂໍໃຫ້ລູກທັງເໝິດທຸກຕົນທຸກຄົນ ຈົ່ງສໍານຶກ! ຈົ່ງຄິດໄດ້!** ເຮົາທໍາອັນໃດໄວ້ ຜົນອັນນັ້ນແລ້ວຈະສະໜອງກັບ ບໍ່ແມ່ນວ່າຈະບໍ່ເຫຼືອ ມາຈາກເຮົາເອງ ເຮົາສ້າງໄວ້ ເຮົາຮັກສາໄວ້ ຜົນອັນນັ້ນແລ້ວ ຈະສະໜອງກັບເຂົ້າມາຄືນ ແລະພາເຮົາອອກໄປ ເຮົາຈະອອກກໍໄດ້ ອອກຈາກໂລກໜ່ວຍນີ້ ກໍຄືອອກຈາກທຸກຂ໌ທັງຫຼາຍທັງປວງໄດ້. **ລູກເອີຍ! ລູກທັງເໝິດທຸກຕົນທຸກຄົນ ຂໍຈົ່ງໃຫ້ສໍານຶກໃໝ່ ສໍານຶກຫາ! ບຸນ ແລະບາບມີຈິງ ອັນໃດເຈົ້າຂອງທໍາໄວ້ ຕ້ອງໄດ້ເຄຼີຍອອກ ໜັກກໍໃຫ້ເຄຼີຍ ເບົາກໍໃຫ້ເຄຼີຍ ຖ້າບໍ່ເຄຼີຍ ຈະມີແຕ່ສູນເສັຍ ເສັຍໄປເທື່ອລະເລັກ ເສັຍໄປເທື່ອລະໜ້ອຍ ຍ້ອນວ່າຝ່າຍບາບຝ່າຍກັມ ເປັນຝ່າຍພາໃຫ້ແຫ້ງແລ້ງ ເປັນຝ່າຍພາໃຫ້ອັບເສົາ** ເປັນຝ່າຍພາໃຫ້ມີແຕ່ຄິດ ຄິດແລ້ວຄິດອີກ ຄິດຈົນບໍ່ສາມາດຢັບຢັ້ງໂຕເອງ

ໄດ້, ຊີວິດຂອງລູກແຕ່ລະຄົນ ຖ້າມີຄວາມຄິດແບບນີ້ ຈະມີແຕ່ສິ່ງກີດກັ້ນ ແລະສິ່ງບຽດບຽນຫຼາຍ ຊີວິດຈະບໍ່ລາບລື້ນ ຈະບໍ່ສົມຫວັງ ຊີວິດຖືກປິດຍ້ອນກະແສແນວຄິດ ຍ້ອນແນວຄິດເຈົ້າຂອງ ຍ້ອນຄິດບໍ່ເຖິງ ຍ້ອນຄິດວ່າເປັນເລື້ອງທຳມະດາ, ລູກ ຫຼືໃຜກໍໃຜ ກໍຕ້ອງຄິດແນວນີ້ ເພາະວ່າຄວາມຄິດມີສິດປຸງແຕ່ງ ເຂົາປຸງແຕ່ງໄດ້ ເຂົາປຸງແຕ່ງເຮົາໃຫ້ຄິດ **ຊີວິດລູກຈະທຸກຂ໌ ເພາະຄວາມຄິດຕະຫຼອດໄປ ຄວາມຄິດທີ່ລູກຮູ້ບໍ່ຖືກຈະພາໃຫ້ລູກເສື່ອມເສັຍ ແລະເສັຍຫາຍ ພັງທະລາຍ ຈົນບໍ່ສາມາດແກ້ໄຂໄດ້ ຊີວິດຂອງລູກກໍຈະຕົກເປັນທາດຂອງຄວາມຄິດຕະຫຼອດໄປ** ເພາະວ່າເຂົາໃຫຍ່ໂຕ ເພາະເຮົາຄິດອອກໃນທາງຜິດ ເຂົາມີສິດໃຫຍ່ແລ້ວ ກໍຄອບງຳເອົາລູກ ພໍ່ກັບແມ່ເຫັນລູກໃນຕໍ່ໜ້າ ຢ້ານລູກບໍ່ພົ້ນບໍ່ຫວິດຈາກສິ່ງເຫຼົ່ານີ້ ຈາກນິສັຍ ຈາກຄວາມຄິດເດີມໆຂອງລູກ

**ລູກເອີຍ! ຈົ່ງຄິດຈົ່ງທົບທວນໄດ້ ທົບທວນໄດ້ສ່ຳລູກ! ເພື່ອວັນນີ້ ແລະວັນໜ້າ ເພື່ອວັນຕໍ່ໄປ ກໍຄືວັນສິ້ນໃຈໄປແລ້ວ ຕອນນັ້ນລູກຈະຮູ້ວ່າອັນໃດເປັນອັນໃດ?** ທຸກຂ໌ເຖິງຂະໜາດໃດ ເພາະວ່າບໍ່ມີບຸນຄ້ຳຊູຍູ້ໜູນຂຶ້ນ ຊີວິດລູກກໍບໍ່ຕ່າງກັນຫຍັງ ກັບຕອນທີ່ຍັງເປັນຄົນ ຕ້ອງຂັດຂ້ອງ ຕ້ອງຍາກ ຕ້ອງລຳບາກ ຍາກຈິງໆລູກເອີຍ! ຍາກແທ້ໆ ຖ້າຫາກວ່າລູກແກ້ໄຂບໍ່ໄດ້! **ຂໍຈົ່ງໃຫ້ລູກທຸກຄົນຫັນປ່ຽນ ຊ່ວຍຕົນເອງໃຫ້ໄດ້ເຖິງທີ່ສຸດເຖີດ!** ຢ່າຄິດວ່າ ຢູ່ໄປຈະດີເອງ! ຕ້ອງເຂົ້າໃຈວ່າ ຢູ່ສ້າງສາພັດທະນາດີ ຈິ່ງດີຂຶ້ນ ຈິ່ງດີຂຶ້ນ ເພາະວ່າດີຢູ່ທີ່ຜົນງານ

ວັນທີ **10/04/2016**, ເວລາ **07:00-07:47** ໂມງ, ໃຊ້ເວລາຈົດຊຽນໄວ້ **47** ນາທີ

**ຜູ່ຮັບຈົດຊຽນ ແລະຕີພິມໄວ້ຈາກແມ່ພຣະ ດຣ. ມະນີສິດ ແກ້ວດາລາ**
ໂທລະສັບ:(+856-20) **2222 8489,** E-mail: manisothk@gmail.com;